# ພັນທະມິຕເພື່ອປະຊາທິປະໄຕໃນລາວ

**ALLIANCE FOR DEMOCRACY IN LAOS**

**Alliance pour la Démocratie au Laos**

*Letmather Str.71, 58119 Hagen, Germany. Phone: 0049( 2334) 44 44 668, E-Mail: alliance-lao@alice.de*

*www.laoalliance.org*


## ຖະແລງການ ພປລ ສນັບສນູນ ຖະແລງຂ່າວ
## ບັນດານັກຊ່ຽວຊານ ສະຫະປະຊາຊາດ ທີ່ການທັກທວງຄວາມເປັນທັມ ຈາກຜົນ
## ສອງປີຫລັງຈາກເຂື່ອນແຕກ

ໃນວັນທີ່ 29 ເມສາ 2020 ຜ່ານມາ ທີມງານນັກຊ່ຽວຊານພິເສດ ຂອງ ສະພາສິດທິມະນຸສ ສະຫະປະຊາຊາດ ຈາກ ເຈນີວາ ແລະ ບາງກອກ ໄດ້ອອກຖະແລງຂ່າວ ທັກທວງໄປຍັງ ບັນດາຣັຖບານ ສປປລາວ, ໄທ ແລະ ເກົາຫລີໃຕ້ ແລະ ພາກສ່ວນ ທຸຣະກິດ ທີ່ກ່ຽວຂ້ອງ ໃຫ້ດຳເນີນການຢ່າງຮີບດ່ວນ ໃນການແກ້ໄຂບັນຫາ ການຣະເມີດສິດທິມະນຸດ ຂອງປະຊາຊົນຜູ້ ລອດຊີວິດຈາກໄພພິບັດ ເຂື່ອນໄຟຟ້າ ເຊປຽນ ເຊນ້ຳນ້ອຍ ແຕກຢູ່ ເມືອງສນາມໄຊ-ແຂວງອັດຕະປື ຂອງລາວ ໃນ ເດືອນ ກໍຣະກະດາ 2018 ຜ່ານມາ ຊຶ່ງ ເຖິງປັດຈຸບັນ ກໍ່ຍັງຖືກຣະເມີດຢູ່. ເຫດການເຂື່ອນແຕກດັ່ງກ່າວ ມີຜູ້ເສັຽຊີວິດ ຢ່າງຕ່ຳ 71 ຄົນ ແລະ ຫລາຍພັນຄົນໄດ້ຮັບຜົນກະທົບ ສູນເສັຽສັບສິນບ້ານເຮືອນ.

ໃນຖະແລງຂ່າວໄດ້ ກ່າວວ່າ ປະຊາຊົນຮວມທັງຊົນເຜົ່າ ຍັງບໍ່ໄດ້ຮັບຄ່າຊົດເຊີຍ ຢ່າງ ເຫມາະສົມ ແລະ ກໍ່ຍັງອາສັຍ ຢູ່ເຮືອນພັກຊົ່ວຄາວ ທີ່ບໍ່ໄດ້ ມາຕຖານ ແລະ ຍັງຂາດເຂີນອາຫານ ການກິນ, ຂາດເຂີນ ນ້ຳ ແລະ ຢາປົວພະຍາດ ຮວມເຖິງບັນຫາ ການອະນາມັຍ ແລະທີ່ດິນ.

ພວກເຮົາອົງການ ພັນທະມິຕເພື່ອປະຊາທິປະໄຕໃນລາວ( ພປລ) ເຫັນວ່າ ການຊ່ວຍເຫລືອ ທີ່ບໍ່ໄປເຖິງປະຊາຊົນ ຜູ້ຖືກກະທົບນັ້ນ ຢ່າງ ແທ້ຈິງ ແມ່ນ ມາຈາກ ການສໍ້ກົງຂອງອຳນາດການປົກຄອງຂອງ ສປປລາວ. ທາງການ ສປປລາວ ໄດ້ ຫ້າມປາມຢ່າງເດັດຂາດ ບໍ່ໃຫ້ປະຊາຊົນ ວິພາກວິຈານ ຮ້ອງຂໍ ຫລື ອອກຂ່າວ ຄວາມເປັນຈິງໃຫ້ໂລກພາຍນອກ ຊາບ. ປະຊາຊົນຜູ້ທີ່ລຸກຂຶ້ນມາ ວິພາກວິຈານ ລ້ວນແລ້ວ ແຕ່ໄດ້ ຖືກຈັບກຸມ ຫລື ເຮັດໃຫ້ ຫາຍສາບສູ. ຜູ້ກຳອຳນາດ ແລະ ນັກລົງທຶນ ໄດ້ສເວີຍສຸກຜົນກຳໄລ ຈາກ ໂຄງການຕ່າງໆ ເຂົ້າໃນຖົງສ່ວນຕົວຂອງຕົນເອງ ແຕ່ ປະຊາຊາຊົນ ຜູ້ໄດ້ຮັບຜົນກະທົບເປັນຜູ້ຮັບ ເຄາະກັມຮັບກັມ ເປັນຜູ້ ຈ່າຍດ້ວຍສັບສິນ, ສຸຂະພາບ ແລະ ຊີວິດ ຂອງເຂົາເຈົ້າ.

ໃນເດືອນ ມິຖຸນາ 2019 ພວກເຮົາ ພປລ ໄດ້ຍື່ນຄຳຮ້ອງຟ້ອງ ຜ່ານທາງ ສະຫະປະຊາຊາດກ່ຽວກັບບັນຫາເຂື່ອນແຕກ ທີ່ເຊປຽນເຊນ້ຳນ້ອຍ ແລະ ໄດ້ ຍື່ນຂໍ້ມູນ ຕໍ່ກອງປະຊຸມ ທົບທວນບັນຫາສິດທິມະນຸສ ຂອງ ສະພາສິດທິມະນຸດ UPR ກ່ຽວກັບ ລາວໃນເດືອນ ມັກກະຣາ 2020 ແລະກິຈະການອື່ນໆ ຂອງສາກົນ. ຖະແລງຂ່າວ ຂອງ ຄະນະນັກຊ່ຽວຊານສະພາສິດທິມະນຸດ ຄັ້ງນີ້ ໄດ້ເປັນການສະແດງໃຫ້ເຫັນ ອີກຄັ້ງໃຫມ່ ວ່າ ທາງສະຫະປະຊາດ ໄດ້ຮັບຮູ້ການທັງທວງຂອງ ພປລ ພວກເຮົາ. ພວກເຮົາ ຂໍສະແດງ ສະແດງຄວາມປິຕິຍິນດີ ຕໍ່ຖະແລງຂ່າວດັ່ງກ່າວ. ອີກເທື່ອນຶ່ງເປັນການສະແດງໃຫ້ເຫັນວ່າ ຜູ້ຊ່ຽວຊານອິດສະຫຼະ ໄດ້ຢືນຢັນ ຕໍ່ບົດສະຫຼຸບຕີລາຄາຂອງ ພປລ ທີ່ເຫັນ ວ່າລັຖະບານ ແລະ ນັກລົງທຶນພຽງແຕ່ສົນໃຈຜົນກຳໄລ, ບໍ່ແມ່ນເພື່ອຄວາມຜາສຸກຂອງປະຊາຊົນ.

**ພວກເຮົາ ອົງການ ພັນທະມິຕເພື່ອປະຊາທິປະໄຕໃນລາວ ແລະ ຊປະຊາຊົນລາວ ຢູ່ໃນ ແລະ ນອກປະເທດໃນປະເທດ ຈຶ່ງຮຽກຮ້ອງມາດັ່ງນີ້:**

1. ຮຽກຮ້ອງໃຫ້ ສະຫະປະຊາຊາດ ກົດດັນຣັຖະບານ ສປປລາວ, ຣັຖບານໄທ ແລະ ຣັຖະບານ ເກົາຫລີໃຕ້ ພ້ອມທັງພາກສ່ວນທຸລະກິດທີ່ກ່ຽວຂ້ອງ ເພື່ອໃຫ້ປະຕິບັດ ຕໍ່ຄວາມຮຽກຮ້ອງ ຕ້ອງການຂອງຄະນະຊ່ຽວຊານສະຫະປະຊາຊາດ ໃຫ້ຖືກຈັດຕັ້ງປະຕິບັດໃຫ້ໄວ ທີ່ສຸດ.

2. ທວງໃຫ້ ຣັຖະບານ ສປປປລາວ ຈົ່ງປ່ອຍປະຊາຊົນລາວ ຜູ້ໄດ້ຮັບຜົນກະທົບທີ່ຢູ່ຍັງບ່ອນສຸກ ເສີນ ໃຫ້ມີເສລີພາບໃນການ ໄປຕັ້ງຖິ່ນຖານ ໃໝ່ ທີ່ເຂົາເຈົ້າຕ້ອງການ.

3. ທວງໃຫ້ ເອົາການຊ່ວຍເຫລືອ ໄປມອບ ໂດຍກົງ ຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກ ເຂື່ອນແຕກ ພາຍໃຕ້ການຊີ້ ນໍາ ຂອງອົງການສະຫະປະຊາຊາດ ໂດຍບໍ່ຜ່ານເຈົ້າຫນ້າທີ່ທາງການ ສປປລາວ.

4. ໃນກໍລະນີທີ່ຣັຖຖະບານ ສປປລາວ ຍັງບໍ່ຍອມແກ້ໄຂປະຕິບັດເປັນຈິງຕໍ່ການຊ່ວຍເຫຼືອ ປະຊາຊົນຜູ້ໄດ້ຮັບຜົນກະທົບ , ມັນເປັນສິ່ງ ຈໍາເປັນທີ່ສະຫະປະຊາຊາດ ແລະບັນດາປະເທດຜູ້ໃຫ້ ທຶນ ຕ້ອງຢຸດເຊົາການ ຈ່າຍເງິນຊ່ວຍເຫຼືອແກ່ລັດຖະບານ ສປປລາວ ແລະຊອກຫາວິທີທາງອື່ນ ໃນການສນອງ ການຊ່ວຍເຫຼືອ.

5. ທວງໃຫ້ ຣັຖບານ ສປປລາວ ຕ້ອງຢຸດຕິ ການຄວບຄຸມ ຈໍາກັດ ຂ່າວ ແລະ ການຊຸມນຸມຊົນ ທີ່ມີອິສະຣະພາບ ໃນລາວຢ່າງຮີບດ່ວນ ທັງນີ້ ກໍ່ເພື່ອໃຫ້ ມີຄວາມໂປ່ງໃສ ຢູ່ໃນ ອໍານາດການ ປົກຄອງໃນລາວຢ່າງແທ້ຈິງ.

ທີ່ຮາເກິນ, ປະເທດເຢັຽຣະມັນ, ວັນທີ່ 2 ພຶສະພາ 2020

ດຣ. ບຸນທອນ ຈັນທະລາວົງ-ວີເຊີ

ປະທານພັນທະມິດເພື່ອປະຊາທິປະໄຕໃນລາວ


**Office in Germany: Dr. Bounthone Chanthalavong- Wiese,** President, Letmather Str.71, 58119 Hagen, Germany
Phone: +49-2334-44 44 668, Email: chanthalavong@aol.com

**France:** **Mr.Sompheth Vatthanou** Vice-President , 2 AV Combattant en a.f.n.69140,Rillieux La Pape,
Phone: +33-6-15192201, s.vatthanou@gmail.com

**USA:** **Ms.Khamphene Souvannasane,** regional president ADL chapter of USA , 3837 Rusty Dell
St.Fortworth,TX 76111, Phone:+1-682- 554- 6675 , Email: khamhene@yahoo.com

**Canada:** **Mr.Kambane Anonthisen,** regional president ADL chapter of Canada, 84 Highgatz Rord Kichener ,ONT,
Phone:+1-519-58 80 502, email: khambane@hotmail.com

**Australia:** **Mr.Pheng Sacksady**, regional president ADL chapter of Australia, 6 Quambone Place,Isabella Plains
A.C.T, Phone:+61-2- 923544, Email: pheng-sone52@gmail.com.au

**New Zealand:** **Mr.Bounleuam Vannathy,** Representativ ADL chapter New Zeeland. 86 Champion St,Cannons Creek
Porirua Wellington.NZ. Phne:+644 237 9565,Email: bvannathy@hotmail.com